ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0143/ທຄຕລ.2026........
ນະຄອນຫຼວງວຽງຈັນ, ວັນທີ:.....16 JAN 2026........

# ໜັງສືແຈ້ງການ

**ເຖິງ:** ທ່ານຜູ້ຖືຮຸ້ນ ທຄຕລ ທີ່ເຄົາລົບ ແລະ ນັບຖືຢ່າງສູງ,

**ເລື່ອງ:** ການຖືຮຸ້ນ ທຄຕລ ຂອງ ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ເລກທີ 79/ສພຊ, ລົງວັນທີ 03/12/2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຄອບຄອງກິດຈະການ ເລກທີ 27/ສຄຄຊ, ລົງວັນທີ 03/09/2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ເລກທີ 29/ຄຄຊ ລົງວັນທີ 29/03/2022;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27/09/2018;
- ອີງຕາມ ໜັງສືລາຍງານ ຈາກ ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ ເລກທີ 0020/CSE.26, ລົງວັນທີ 14/01/2026.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ຂໍຖືເປັນກຽດຮຽນລາຍງານມາຍັງບັນດາຜູ້ທ່ານຜູ້ຖືຮຸ້ນ ທຄຕລ ຊາບວ່າ: ປັດຈຸບັນ ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ ໄດ້ຖືຄອງຮຸ້ນ ທຄຕລ ຜ່ານການຊື້ຮຸ້ນຂອງ ທຄຕລ ຜ່ານຕະຫຼາດຂັ້ນສອງ (ຕະຫຼາດຫຼັກຊັບລາວ) ເຊິ່ງໄດ້ຖືຄອງຮຸ້ນທັງໝົດ ຈຳນວນ **105,120,100 ຮຸ້ນ** ເທົ່າກັບ **6.80%** ຂອງຈຳນວນຮຸ້ນທັງໝົດຂອງ ທຄຕລ. ຈຸດປະສົງຂອງການຊື້ຮຸ້ນຕາມໜັງສືສະເໜີຂອງບໍລິສັດດັ່ງກ່າວແມ່ນ ເພື່ອລົງທຶນໃນຕະຫຼາດຫຼັກຊັບລາວ ແລະ ປະກອບຄຳເຫັນໃນກອງປະຊຸມຜູ້ຖືຮຸ້ນ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານຜູ້ຖືຮຸ້ນ ທຄຕລ ທຸກທ່ານເພື່ອຊາບ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖື,

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ